ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ: ສີບຸນເຮືອງ, ບ້ານ: ສີບຸນເຮືອງ, ເມືອງ: ຈັນທະບູລີ, ນະຄອນຫຼວງວຽງຈັນ, ສ.ປ.ປ ລາວ, ໂທ: 856 21 264834-5, ແຟັກ: 856 21 264836
PetroTrade Sibounhueng Rd, Sibounhueng Village, Chanthabouly District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856 21 264836

ເລກທີ. 095 /PTL/2017

ນະຄອນຫຼວງວຽງຈັນ, ວັນທີ 28 ສິງຫາ 2017

ຮຽນ: ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 3/2017

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ສະບັບເລກທີ 007/ຄຄຊ, ລົງວັນທີ 03 ເມສາ 2014.
- ອີງຕາມ ມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2016, ວັນທີ 27 ເມສາ 2017.

ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ( "ບໍລິສັດ" ຫຼື "ປທລ") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 3/2017 ວັນທີ 28 ສິງຫາ 2017, ດັ່ງລາຍລະອຽດລຸ່ມນີ້:

**ວາລະທີ 1:** ຮັບຮອງເອົາ ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2016, ເມື່ອວັນທີ 27 ເມສາ 2017;

**ວາລະທີ 2:** ຮັບຮອງເອົາ ບົດລາຍງານສະຫຼຸບຜົນການດຳເນີນທຸລະກິດ ປະຈຳ 6 ເດືອນຕົ້ນປີ 2017;

**ວາລະທີ 3:** ຮັບຮອງເອົາ ບົດລາຍງານເອກະສານທາງດ້ານການເງິນປະຈຳ 6 ເດືອນຕົ້ນປີ 2017 ແບບລວມ ແລະ ແຍກຜົນປະກອບການ ທີ່ຜ່ານການກວດສອບຜູ້ກວດສອບພາຍນອກ;

**ວາລະທີ 4:** ຮັບຮອງເອົາ ແຜນການຂາຍປະຈຳປີ 2017 ສະບັບປັບປຸງ ຈາກແຜນປະຈຳປີ 2017 ທີ່ຮັບຮອງໃນກອງປະຊຸມສາມັນຜູ້ຖືຮຸ້ນ ຈຳນວນ 615.06 ລ້ານລິດ ມາເປັນ 149.22 ລ້ານລິດ. ການປັບປຸງແຜນ ການຂາຍນີ້ເນື່ອງຈາກວ່າ 68% ໃນແຜນການນີ້ແມ່ນລວມເອົາ ແຜນການຂາຍໃນຮູບແບບ Re-export ເຊິ່ງຜູ້ບໍລິຫານບໍລິສັດໄດ້ທົບທວນຄືນແນວທາງ ແລະ ຜົນກະທົບຈາກສະພາບກົນໄກດ້ານໂຄງສ້າງລາຄາທີ່ມີທ່າອ່ຽງທີ່ສ່ຽງຕໍ່ການລົງທຶນ ແລະ ທີມຜູ້ບໍລິຫານກຳລັງຢູ່ໃນຊ່ວງການປັບປ່ຽນກົນລະຍຸດ ແລະ ຍຸດທະສາດ ພ້ອມທັງສຶກສາຮູບແບບການຂາຍ Re-export ນີ້ຄືນໃໝ່ເພື່ອໃຫ້ສອດຄ່ອງກັບສະພາບການຕະຫຼາດນ້ຳມັນທີ່ຜັນຜວນຈາກຜົນກະທົບວິກິດລາຄານ້ຳມັນຕະຫຼາດໂລກໃນປີ 2016 ເປັນຕົ້ນມາຈົນຮອດປະຈຸບັນ;

**ວາລະທີ 5:** ລາຍງານຄວາມຄືບໜ້າກ່ຽວກັບການອອກຮຸ້ນກູ້, ຄະນະຜູ້ບໍລິຫານ ປທລ ຂໍແຈ້ງໃຫ້ຜູ້ຖືຮຸ້ນທັງຫຼາຍຊາບວ່າ ປທລ ຕັດສິນໃຈຊະລໍໂຄງການອອກຮຸ້ນກູ້ທີ່ໄດ້ດຳເນີນການໃນປີທີ່ຜ່ານມາກ່ອນ ແຕ່ບໍ່ໄດ້ຍົກເລີກ. ສາຍເຫດທີ່ສຳຄັນແມ່ນເນື່ອງມາຈາກຜົນປະກອບການປີ 2016 ທີ່ຂາດທຶນ ແຕ່ທັງນີ້ໂຄງການອອກຮຸ້ນກູ້ຂອງບໍລິສັດແມ່ນໄດ້ຮັບການອະນຸມັດຢ່າງເປັນທາງການເປັນທີ່ຮຽບຮ້ອຍແລ້ວຈາກພາກລັດ ລວມເຖິງພາກສ່ວນທີ່ກ່ຽວຂ້ອງເຊັ່ນ ບໍລິສັດທີ່ປຶກສາທາງດ້ານການອອກ ແລະ ຄ້ຳປະກັນຮຸ້ນກູ້ຄື UOB

(United Overseas Bank Thailand) ແລະ CGIF (Credit Guarantee & Investment Facility) ຕ່າງກໍ່ມີຄວາມພ້ອມທັງໝົດ ເຊິ່ງຕາມແຜນແມ່ນຈະອອກຈຳໜ່າຍທີ່ສີງກະໂປ 90% ແລະ ຈະອອກຈຳໜ່າຍແກ່ນັກລົງທຶນທີ່ສົນໃຈທີ່ປະເທດລາວ 10% ໃນອັດຕາດອກເບ້ຍ 4.5% ຄະນະຜູ້ ບໍລິຫານຄາດການວ່າຈະສາມາດດຳເນີນການໂຄງການອອກຮຸ້ນກູ້ນີ້ຕໍ່ໄປໃນໄຕມາດທີ 1 ຫຼື ການປີ 2018 ເຊິ່ງຖ້າມີຄວາມຄືບໜ້າຈະແຈ້ງຢ່າງເປັນທາງການແກ່ຜູ້ຖືຮຸ້ນຕໍ່ໄປ.

ຈຶ່ງຮຽນມາເພື່ອຊາບ

ດ້ວຍຄວາມເຄົາລົບນັບຖືຢ່າງສູງ
ຮອງປະທານສະພາບໍລິຫານ

ບໍລິສັດ ປິໂຕຣລຽມເທຣດດິ້ງລາວ ມະຫາຊົນ Petroleum Trading Lao Public Company

ຈັນທອນ ສິດທິໄຊ